# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ວັນທີ 2 ເດືອນ ມີນາ ( 03-02-2008 )

---

## ດຳຣົງຊີວິດ 3:16 ຕາມພຣະຄັມພີ

**ຂໍ້ພຣະຄັມພີໃນບົດຮຽນ:** ( 2 ຕີໂມທຽວ 1:8-12; 3:14-4:4 )

**ຄຳຖາມແຫ່ງຊີວິດ:** ເປັນຫຍັງ ພຣະຄັມພີຈຶ່ງສາມາດທີ່ຈະຊ່ວຍໃຫ້ຂ້າພະເຈົ້າໄດ້ດຳຣົງຊີວິດຢູ່ດ້ວຍຄວາມໝັ້ນໃຈໃນເມື່ອທຸກວັນນີ້ມີແຕ່ຄວາມຢ້ານກົວແລະໂລກກໍມີການປ່ຽນແປງເກີດຂື້ນຢູ່ສເມີ?

**ພຣະຄັມພີແຫ່ງຄວາມຈິງ:** ພຣະຄັມພີໄດ້ເປີດເຜີຍຄວາມຈິງໃນເຣື່ອງຄວາມລອດພົ້ນແລະຄຳແນະນຳສຳລັບການດຳຣົງຊີວິດທີ່ຖືກຕ້ອງ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂື້ນເພື່ອຊ່ວຍທ່ານໃຫ້ດຳຣົງຊີວິດຢູ່ໃນແຕ່ລະວັນດ້ວຍຄວາມໝັ້ນໃຈແລະຄວາມຫວັງທີ່ພຣະເຈົ້າໄດ້ຊົງປະທານໃຫ້ໂດຍ:

* ມີຄວາມເຫັນດີກັບພຣະຄັມພີວ່າເປັນການຊົງດົນໃຈຈາກພຣະເຈົ້າເພື່ອຈະນຳມາໃຊ້ໃນຊີວິດຂອງທ່ານ;
* ໃຫ້ຄຳໝັ້ນສັນຍາທີ່ຈະມີສ່ວນຮ່ວມໃນການອ່ານພຣະຄັມພີແລະສຶກສາໃນຊີວິດແຕ່ລະວັນ.

## ສຶກສາພຣະຄັມພີ:

ໂຈໄດ້ຖືກສົ່ງໄປຈຳຄຸກດ້ວຍຄວາມຜິດທີ່ຮ້າຍແຮງ, ແຕ່ລາວກໍໄດ້ຮັບປື້ມພຣະຄັມພີຫົວນຶ່ງເພື່ອອ່ານໃນຂະນະທີ່ລາວຖືກຂັງຢູ່ໃນຄຸກນັ້ນ. ຫລັງຈາກທີ່ຮັບໂທດໃນຄຸກຫລາຍສິບປີຜ່ານໄປ, ໂຈໄດ້ອ່ານແລະໄດ້ຂຽນບັນທຶກຫລາຍສິ່ງຫລາຍຢ່າງທີ່ລາວໄດ້ຮຽນຮູ້ກ່ຽວກັບເຣື່ອງພຣະຄັມພີ. ຕົວຢ່າງ, ໂຈໄດ້ຮຽນຮູ້ວ່າມີພຣະຄຳຈັກບົດຈັກຕອນແລະຈັກຂໍ້ທີ່ມີ, ຄືໃນພຣະທັມເອສເທີ 6:9 ເປັນຂໍ້ທີ່ຍາວທີ່ສຸດແລະໃນໂຢຮັນ 11:35 ນັ້ນເປັນຂໍ້ທີ່ສັ້ນທີ່ສຸດ. ແຕ່ໂຈໄດ້ຄວາມໝາຍທີ່ຜິດໄປ. ຄືລາວຕ້ອງການໃຫ້<u>ອະພັຍ</u>ໃນຄວາມບາບມີ<u>ຊີວິດໃໝ່</u> ທັງທີ່ລາວໄດ້ອ່ານພຣະຄັມພີຈົບໄປຫລາຍເທື່ອ-ແຕ່ບໍ່ໄດ້ພົບທັງສອງສິ່ງທີ່ກ່າວມາຂ້າງເທິງນີ້ເລີຍ. ພຣະຄັມພີບໍ່ໄດ້ມີຄວາມໝາຍທີ່ແທ້ຈິງກັບລາວມີພຽງເປັນແຫລ່ງທີ່ຄວນສຶກສາຄົ້ນຄວ້າທີ່ໜ້າສົນໃຈເທົ່ານັ້ນ.

ປື້ມພຣະຄັມພີເປັນປື້ມທີ່ໄດ້ຂາຍດີທີ່ສຸດໃນທຸກລະດູການ ແລະກໍຍັງຄົງມີຕົວເລກຂາຍທີ່ສູງທີ່ສຸດຂອງຍອດຂາຍໃນແຕ່ລະປີ. ຄຣິສະຕຽນຮູ້ວ່າປື້ມນີ້ມີຄວາມໝາຍຫລາຍ ເພາະວ່າບໍ່ເປັນພຽງສິ່ງທີ່ມັກແລະພໍໃຈສຳລັບຜູ້ຊົມໃຊ້ທັງຫລາຍເທົ່ານັ້ນ . ພຣະຄັມພີແມ່ນໄດ້ບັນທຶກພຣະຄຳຂອງພຣະເຈົ້າຈາກການດົນໃຈຂອງພຣະອົງເອງເພື່ອທີ່ຈະໄດ້ເປີດເຜີຍໃຫ້ມະນຸດຜູ້ທີ່ມີຄວາມຜິດບາບໄດ້ຮູ້ເຖິງວິທີທາງທີ່ຈະຄືນດີມີຄວາມສຳພັນກັບພຣະອົງ ໂດຍຜ່ານຄວາມເຊື່ອໃນພຣະບຸດຄືພຣະເຢຊູຄຣິດເຈົ້າ. ຂໍ້ພຣະທັມທີ່ພວກເຮົາໄດ້ຮຽນໃນບົດນີ້ຈະໄດ້ເຕືອນພວກເຮົາເຖິງຄຳສັ່ງ, ຄຳສອນ, ແລະຄວາມຈິງທີ່ໄດ້ອະທິບາຍໃນພຣະຄຳທີ່ສັກສິດຂອງພຣະເຈົ້າ. ພຣະຄັມພີມີຄວາມໝາຍສຳລັບທ່ານແນວໃນໃດ?

### 1. <u>ຈົ່ງຢູ່ໃນຄວາມໝັ້ນໃຈໃນຂ່າວປະເສີດຂອງພຣະຄັມພີ</u> : ( 2 ຕີໂມທຽວ. 1:8-12 )

ໃນ ຄ.ສ. 60-62 ( ຫລັງຈາກພຣະເຢຊູ ) ໂປໂລໄດ້ຂຽນພຣະຄຳສີ່ບົດຈາກຕັ້ງແຕ່ ເປັນນັກໂທດຢູ່ໃນກຸງໂຣມ ( ເອເຟໂຊ, ຟີລິບປອຍ, ໂກໂລຊາຍ, ແລະຟີລີໂມນ ). ໂປໂລອາດຖືກປ່ອຍ, ແຕ່ໃນລະຫວ່າງປີ ຄ.ສ. 67, ເບິ່ງຄືວ່າເພິ່ນໄດ້ຖືກຈຳຄຸກໃນກຸງໂຣມອີກ. ນັກສຶກສາພຣະຄັມພີຫລາຍຄົນມີຄວາມເຊື່ອວ່າໃນເວລາທີ່ໂປໂລໄດ້ຂຽນພຣະຄັມພີ 2 ຕີໂມທຽວຢູ່ນັ້ນ ໂປໂລໄດ້ຮູ້ວ່າກຳລັງຈະປະເຊີນໜ້າກັບບັນຫາຫຍຸ້ງຍາກທີ່ຈະເກີດຂື້ນ ( ເບິ່ງ 4:6-8 ). ໂປໂລໄດ້ຂຽນໜັງສືສະບັບສຸດທ້າຽໄປຫາຕີໂມທຽວ, ຊຶ່ງເປັນ " ບຸດທີ່ຮັກ " ຂອງເພິ່ນ( 2 ຕມທ. 1:2 ). ຕີໂມທຽວເປັນຜູ້

ຮ່ວມງານທີ່ມີຄວາມເຊື່ອແລະໄວ້ວາງໃຈໃນການຮ່ວມປະກາດຕັ້ງແຕ່ໂປໂລເລີ້ມອອກໄປປະກາດຄັ້ງທີສອງ, ທີ່ໂປໂລໄດ້ໄປເຖິງເມືອງ ລິດສະຕຣາ. ທີ່ນັ້ນເປັນບ້ານເກີດຂອງຕີໂມທຽວ, ຕັ້ງແຕ່ 15 ປີກ່ອນນັ້ນ ( ກຈກ. 16:1-3 ).

*ໃນຊີວິດຂອງທ່ານເຄີຍໄດ້ພົບກັບຄວາມລະອາຍທີ່ຈະບອກຄວາມຈິງວ່າທ່ານເປັນ ຄຣິສະຕຽນຫລືບໍ່? ທ່ານແກ້ໄຂບັນຫານັ້ນຢ່າງໃດ?*

ອາດມີເວລານຶ່ງທີ່ການຖືກຈຳຄຸກຂອງໂປໂລໄດ້ສິ້ນສຸດລົງ. ເບິ່ງຄືວ່າໂປໂລໄດ້ປະຕີໂມທຽວໄວ້ທີ່ເມືອງເອເຟໂຊເພື່ອເປັນຕົວແທນຂອງເພິ່ນຢູ່ທີ່ວິຫານ ( 1 ຕມທ. 1-3 ). ຕີໂມທຽວກໍຍັງຄົງຢູ່ທີ່ເມືອງເອເຟໂຊໃນຂະນະທີ່ໂປໂລໄດ້ຂຽນຫນັງສືທັງສອງສະບັບນີ້ເຖິງລາວ.

ດ້ວຍການທີ່ໂປໂລຖືກຈອງຈຳແລະຖືກຂົ່ມເຫງທໍຣະມານບໍ່ໄດ້ເປັນສາເຫດໃຫ້ຕີໂມທຽວມີຄວາມທໍ້ຖອຍຈາກການປ່າວປະກາດຂ່າວປະເສີດ. ໂດຍການດຳເນີນຕໍ່ໄປໃນການຮັບເອົາຂ່າວປະເສີດເຣື່ອງຄວາມລອດພົ້ນໃນພຣະເຢຊູຄຣິດ, ຕີໂມທຽວໄດ້ອ້າງເຖິງ**ຄວາມບໍ່ລະອາຍທີ່ຈະເປັນພະຍານ** ຕີໂມທຽວໄດ້ອ້າງເຖິງ**ຄວາມບໍ່ລະອາຍທີ່ຈະເປັນພະຍານຝ່າຍອົງພຣະຜູ້ເປັນເຈົ້າ** ຫລືຝ່າຍຂອງໂປໂລທີ່ຖືກຈຳຈອງ ຢູ່. ແທ້ຈິງແລ້ວ, ນີ້ເປັນສະຖານະການຢ່າງນຶ່ງທີ່ເຮັດໃຫ້ຕີໂມທຽວໄດ້ມີໂອກາດທີ່ຈະໄດ້**ມີສ່ວນຮ່ວມໃນຄວາມຍາກລຳບາກ** ເພື່ອເຫັນແກ່ຂ່າວປະເສີດໂດຍອາສັຍຣິດ ເດດຂອງພຣະເຈົ້າ. ພຣະເຢຊູຊົງບອກໄວ້ແລ້ວເຖິງສິ່ງທີ່ຈະຕ້ອງເສັຽສລະໃນການທີ່ຈະເປັນຜູ້ຕິດຕາມພຣະອົງ ( ລກ. 9:23-26 ).

ໃນພຣະຄັມພີຂອງພຣະເຈົ້າມີຂໍ້ຄວາມບັນທຶກແລະໃນຂໍ້ 9-10 ໄດ້ທ້ອນໂຮມຄວາມຈິງຫລາຍຢ່າງໄວ້ກ່ຽວກັບຄວາມລອດພົ້ນ. ພຣະເຈົ້າ**ໄດ້ຊ່ວຍພວກເຮົາ**ດ້ວຍການ**ຊົງເອີ້ນດ້ວຍພຣະຄຸນເພາະຄວາມເຊື່ອແລະບໍ່ແມ່ນເຮົາທັງຫລາຍຈະເຮັດເອົາເອງ** ( ອຟຊ. 2:8-10 ) ຂໍ້ພຣະຄຳນີ້ໄດ້ສອນໄວ້ແລ້ວຢ່າງລະອຽດຄືມະນຸດບໍ່ສາມາດທີ່ຈະເຮັດເອົາເອງໄດ້. ເຖິງຈະເຮັດຫລາຍແລະດີປານໃດກໍຕາມ. ມີພຽງດ້ວຍພຣະຄຸນຂອງພຣະເຈົ້າເທົ່ານັ້ນ, ພຣະອົງໄດ້ຊົງສຳແດງພຣະຄຸນແກ່ຄົນບາບທັງຫລາຍເພື່ອໃຫ້ມີຫົນທາງທີ່ຈະໄດ້ຮັບຄວາມລອດພົ້ນ. ຕາມປົກກະຕິພວກເຮົາຄິດວ່າພຣະຄຸນຂອງພຣະເຈົ້າຈະປະທານເພື່ອໃຫ້ມີຄວາມເຊື່ອໃນພຣະເຢຊູຄຣິດ, ແຕ່ໂປໂລໄດ້ອະທິບາຍດັ່ງນີ້ໃນພຣະເຢຊູຄຣິດນັ້ນພຣະອົງໄດ້ຊົງເລືອກເຮົາໄວ້ຕັ້ງແຕ່ກ່ອນທີ່ຈະຊົງເລີ້ມສ້າງໂລກ ( ອຟຊ.1:4 ). ແຜນການອັນຕລອດໄປເປັນນິດໄດ້ມີມາແຕ່ຈະສຳເຣັດບໍຣິບູນແລະ**ສິ້ນພຣະຊົນໃນທີ່ສຸດ,** ຄືໄດ້ເລີ້ມມີ**ຊີວິດອັນຕະເພື່ອທີ່ຈະເປັນແສງສະວ່າງຜ່ານຂ່າວປະເສີດ.** ພວກເຮົາໄດ້ປະຖິ້ມຊີວິດເມື່ອເຖິງຈຸດຂອງຄວາມເຊື່ອໃນພຣະຄຣິດ ແລະຜູ້ທີ່ເຊື່ອກໍໄດ້ຮັບຮ່າງກາຍແບບດຽວກັນກັບພຣະຄຣິດໃນເວລາທີ່ພຣະອົງໄດ້ຟື້ນຄືນພຣະຊົນ, ຄືຈະບໍ່ມີຄວາມຕາຍອັນໃດອີກຕໍ່ໄປ ( 1 ກຣທ. 15:50-57 ).

ລາງວັນທີ່ໂປໂລໄດ້ຮັບຈາກພຣະຄຣິດທີ່ໄດ້ຮັບຈາກຂ່າວປະເສີດນີ້ມີຮວມກັນທັງຫມົດສາມຢ່າງ. ຄື ( 1 ) **ເປັນຜູ້ນຳ**ທີ່ໄດ້ຮັບຣິດອຳນາດຢ່າງສູງສຸດໃນການນຳພາຄົນອື່ນ. ( 2 ) **ເປັນຜູ້ປ່າວປະກາດ**ທີ່ຖືກສົ່ງອອກໄປໂດຍໄດ້ຮັບສິດອຳນາດຍິ່ງໃຫຍ່ໃນການທີ່ຈະປະກອບກິຈການໃດໆ. ( 3 ) **ເປັນຄຣູ**ທີ່ມີສິດອຳນາດໃນການອະທິບາຍໃຫ້ແກ່ຄົນອື່ນເອົາຕາມແບບຢ່າງ. ໂປໂລໄດ້ຂອງພຣະຣາຊທານເຫລົ່ານີ້ເພື່ອເຫດຜົນທີ່ເພິ່ນຈະໄດ້ມີຈິດໃຈພ້ອມ**ທີ່ຈະຖືກທຸກທໍລະມານໃນສິ່ງນີ້,** ຄືມີສ່ວນພົວພັນທີ່ເພິ່ນໄດ້ເຮັດມາຕລອດຊີ ວິດເພື່ອເຫັນແກ່ພຣະນາມພຣະຄຣິດ ( 2 ກຣທ. 11: 23-28 ຈະມີສ່ວນຮ່ວມຕາມເຫດທີ່ໄດ້ເກີດ ) ແລະກຳລັງຈົບສິ້ນໃນໄວ ໆ ນີ້.

ໃນ 2 ຕມທ 1:12, ປໂລໄດ້ບອກໃຫ້ໂມທຽວຮູ້ໃນເຣື່ອງທີ່ເພິ່ນ**ບໍ່ໄດ້ລະອາຍ**ໃນທຸກສິ່ງທີ່ຕ້ອງຖືກທຸກທໍລະມານ-ຫລືແມ້ແຕ່ການຖືກຈຳຈອງ. ໂປໂລຮູ້ວ່າພຣະເຈົ້າສັດຊື່ຕໍ່ລາງວັນທີ່ຈະມອບໃຫ້ແກ່ຜູ້ທີ່ເຮັດວຽກໃຫ້ແກ່ພຣະຄຣິດໃນວັນນັ້ນ, ບາງທີອາດຈະມີຄວາມຫມາຍເຖິງວັນພິພາກສາໃນອະນາຄົດ ( ໂຣມ.14:10; 2 ກຣທ. 5:10 ). ຄຣິສະຕຽນໃນທຸກວັນນີ້ສາມາດມີຄວາມຫມັ້ນໃຈໃນເຣື່ອງຂ່າວປະເສີດຂອງຄວາມລອດພົ້ນໃນພຣະຄຣິດ ທີ່ມີຢ່າງຫລວງຫລາຍລົ້ນກວ່າສິ່ງຊົ່ວຮ້າຍທີ່ເກີດຂື້ນຈາກຄວາມກັງວົນກ່ຽວກັບເຣື່ອງການກໍ່ວິນາສກັມ, ສີຜິວ, ການຂົ່ມເຫງ, ຫລືທຸກໆບັນຫາທີ່ເຮົາພົບພໍ້ຢູ່.

## ໒. <u>ປະຕິບັດຕາມຄຳແນະນຳຈາກພຣະຄັມພີ:</u> ( ໒ ຕມທ. 3:14-17 )

ໂປໂລໄດ້ເຕືອນຕີໂມທຽວເຣື່ອງ " ເວລາແຫ່ງຄວາມຍາກລຳບາກ " ມີຢູ່ຕໍ່ໜ້າຂອງພວກທີ່ຕິດຕາມພຣະຄຣິດ ( ໒ ຕມທ.3:1 ), ແລະເພິ່ນກໍ່ໄດ້ອະທິບາຍເຖິງອາການຂອງຜູ້ທີ່ບໍ່ເຊື່ອວ່າເປັນແນວໃດແດ່ ( ຂໍ້ ໒-9 ). ໂປໂລຮູ້ວ່າຕີໂມທຽວໄດ້ຝຶກແອບການສອນທີ່ໄດ້ຮັບການແນະນຳຈາກອັຄສາວົກເຖິງຄົນຊົ່ວແລະຄົນເຈົ້າເລ້ຈະຊົ່ວຫລາຍກວ່າເກົ່າ ( ຂໍ້ 10-13 ). ດ້ວຍພຣະຄັມພຣະເຈົ້າເປັນພື້ນຖານທີ່ແຂງແກ່ງ, ຕີໂມທຽວຍັງຄົງສາມາດເຮັດໃນສິ່ງທີ່ລາວໄດ້ຮຽນຮູ້ແລະມີຄວາມເຊື່ອໜັ້ນຢ່າງໜນຽວແໜ້ນ. ໂປໂລໄດ້ຢ້ຳເຖິງພຣະຄັມພີເດີມທີ່ພິເສດຄືຕອນທີ່ຕີໂມທຽວໄດ້ຮຽນຮູ້ໃນສມັຍຍັງເປັນເດັກນ້ອຍຢູ່ພຸ້ນ ຄືຕີໂມທຽວໄດ້ຮູ້ເຖິງຂໍ້ເລິກລັບໃນຂໍ້ພຣະທັມນັ້ນ. ແມ່ຂອງຕີໂມທຽວເປັນຄຣິສຕຽນຊາວຢິວ, ແຕ່ພໍ່ເປັນຊາວກຣີກ (ກຈກ.16:1 ). ຕີໂມທຽວເປັນຄົນຂອງພຣະເຈົ້າທາງສາຍເລືອດຈາກແມ່ແລະແມ່ຕູ້ຂອງລາວຄືໂລອິສ (໒ ຕມທ.1:5 ) . ແມ່ຍິງທັງສອງຄົນນີ້ໄດ້ສັ່ງສອນໂຕໂມທຽວໃຫ້ຮັກຂໍ້ພຣະຄຳທີ່ສັກສິດແລະຮັກພຣະເຢຊູດ້ວຍ ພຣະເມສີອາທີ່ພຣະທັມຫລາຍຕອນໄດ້ກ່າວເຖິງຈະໄດ້ນຳຊີວິດຂອງຕີໂມທຽວໃຫ້ສາມາດຮູ້ພຣະຄຳຂອງພຣະເຈົ້າໃນການແນະນຳທີ່ຈະດຳຣົງຊີວິດ ເຮັດຢ່າງໃດຈຶ່ງຈະເປັນທີ່ຊອບພຣະທັຍພຣະເຈົ້າ**ໂດຍຜ່ານທາງຄວາມເຊື່ອໃນພຣະເຢຊູຄຣິດ.** ຕີໂມທຽວຈະເຂົ້າໃຈ**ເຣື່ອງຄວາມລອດພົ້ນ**ໂດຍນຳມາໃຊ້ໃນຊີວິດຕາມທີ່ໄດ້ເຫັນປາກົດໃນພຣະຄັມພີເດີມແລະຈາກການສິດສອນຂອງໂປໂລ. ຄວາມເຊື່ອເປັນພື້ນຖານທີ່ຈະຕຽມເພື່ອຈະເຮັດທຸກສິ່ງເພື່ອໃຫ້ເປັນທີ່ຊອບພຣະທັຍພຣະເຈົ້າໄດ້ ( ຮບ. 11:6 ).

ເຖິງແມ່ນວ່າຄວາມໝາຍທີ່ສຳຄັນ**ທັງໝົດໃນຂໍ້ພຣະທັມ**ສຳລັບຕີໂມທຽວແລ້ວແມ່ນພຣະຄັມພີເດີມ, ຄຣິດຕຽນໄດ້ຮູ້ແລະເຂົ້າໃຈຄວາມຈິງວ່າພຣະຄັມເຫລົ່ານີ້ໄດ້ນຳໃຊ້ໃນພຣະຄັມພີໃໝ່ຄືກັນ. ສິ່ງທີ່ພິເສດທີ່ສຸດຂອງພຣະຄັມພີກໍ**ຄືເປັນການດົນໃຈໂດຍພຣະເຈົ້າ.** ທີ່ມີຄຳປຽບທຽບໃນພາສາກຣີກຄື " ລົມຫັນໃຈຂອງພຣະເຈົ້າ " ພຣະເຈົ້າໄດ້ຫັນໃຈເຂົ້າສູ່ການຂຽນບັນທຶກຂອງຜູ້ປະກາດພຣະທັມແລະພວກອັຄສາວົກ. ດັ່ງນັ້ນພຣະຄຳຂອງພຣະອົງທີ່ມີຊີວິດຢູ່ (ຮບ. 4:1໒ ).

ເພາະວ່າຂໍ້ພຣະທັມເປັນຂອງພຣະເຈົ້າ, ໂປໂລຈຶ່ງໄດ້ອະທິບາຍວ່າເປັນສິ່ງທີ່ມີປໂຍດແລະມີຄຸນຄ່າທີ່ສຸດຢູ່ສີ່ຢ່າງ. ຄື<u>ທີນຶ່ງ</u> ແມ່ນການ**ສັ່ງສອນ**ຫລືວ່າກ່າວ- ເພື່ອຊ່ວຍໃຫ້ພວກເຮົາໄດ້ຮຽນຮູ້ເຣື່ອງຄວາມຈິງທີ່ຍິ່ງໃຫຍ່ໃນຄວາມເຊື່ອຂອງຄຣິສະຕຽນ. <u>ທີສອງ</u>ຄືເປັນ**ການຕັກເຕືອນລ່ວງ**ໜ້າ-ເພື່ອຈະໄດ້ບອກກ່າວເຣື່ອງຄຣູສອນປອມທີ່ພວກເຮົາຢູ່ໃນລະຫວ່າງຄວາມສົງໃສແລະຄວາມເຊື່ອທີ່ຜິດໃນຊີວິດຂອງພວກເຮົາ. <u>ຕໍ່ໄປ</u>ກໍແມ່ນ**ການແກ້ໄຂ**, ເພື່ອດັດແປງໃຫ້ຖືກຕ້ອງ ເມື່ອພວກເຮົາຫາກຢູ່ຫ່າງຈາກຄວາມຈິງ. <u>ສຸດທ້າຍ</u>ຄືພຣະຄັມພຣະເຈົ້າ ແມ່ນໄດ້ຮັບ**ຜົນກຳໄລເພື່ອການຝຶກຝົນໃນສິ່ງທີ່ຖືກຕ້ອງ**-ເພື່ອຈະໄດ້ມີການຝຶກຝົນຕົວເອງເພື່ອຈະໄດ້ດຳຣົງຊີວິດຢູ່ຢ່າງຖືກຕ້ອງ ກໍເພາະພວກເຮົາຢາກໃຫ້ພຣະບິດາຜູ້ຊົງສະຖິດສວັນພໍພຣະທັຍ. ເມື່ອຂໍ້ພຣະທັມໄດ້ນຳພາຊີວິດຂອງພວກເຮົາມາເຖິງຈຸດນີ້ແລ້ວ, ພວກເຮົາກໍ**ເປັນພາຊະນະ**ທີ່ໄດ້ຕຽມໄວ້ພ້ອມແລ້ວທີ່ຈະ**ໃຊ້ງານດີທຸກຢ່າງ**ທີ່ພຣະບິດາໄດ້ຊົງຈັດຕຽມໄວ້ໃຫ້ແລ້ວ.

## 3. <u>ເຫັນເຖິງຄວາມຈິງຂອງພຣະຄັມພີ:</u> ( ໒ ຕີໂມທຽວ. 4:1-4 )

ຄົນຂອງພຣະເຈົ້າມີສິດສ່ວນຕົວທີ່ໜ້າອັສຈັນແລະມີຄວາມຮັບຜິດຊອບຕໍ່ການແບ່ງປັນຄວາມຈິງເພື່ອທຸກຄົນຈະໄດ້ຍິນກ່ອນທີ່ພຣະເຢຊູຈະສະເດັດມາ **ເພື່ອທີ່ຈະພິພາກສາທັງຄົນເປັນແລະຄົນຕາຍ.** ພຣະຄຳທີ່ວ່າ**ຂ້າພະເຈົ້າກຳຊັບທ່ານ**:ໄດ້ສະແດງໃຫ້ເຫັນໄດ້ຮັບມອບໝາຍຢ່າງຈິງຈັງ ແລະດ້ວຍຄວາມຮັບຜິດຊອບເພື່ອຕົວເພິ່ນເອງແລະຕີໂມທຽວດ້ວຍ. ໂປໂລໄດ້ບອກໃຫ້ຕີໂມທຽວ**ໃຫ້ປະກາດພຣະວັຈນະ.** ຜູ້ເຊື່ອທັງຫລາຍຈະໄດ້ເຫັນແຈ້ງເຖິງຄວາມຈິງເຣື່ອງພຣະຄຳເຖິງແມ້ວ່າຈະກຳລັງເຮັດຢູ່ໃນ**ເວລາທີ່ບໍ່ພ້ອມກໍຕາມ**; ຈຶ່ງສະແດງຄວາມຈິງໃນເຣື່ອງພຣະຄຳພຣະເຈົ້າທີ່**ຕ້ອງມີຄວາມອົດທົນຫລາຍທີ່ສຸດ**ຫລືຢືນຢັດຢູ່ໄດ້. ສັດຕຣູຂອງພຣະເຈົ້າຈະຈ້ອງທີ່ຈະທົດສອບຜົນຂອງພວກເຮົາເພື່ອທີ່ຈະພະຍາຍາມຢຸດຢັ້ງບໍ່ໃຫ້ພວກເຮົາແບ່ງປັນຂ່າວປະເສີດ.

ໂປໂລໄດ້ໃຫ້ເຫດຜົນຢູ່ສາມຢ່າງເປັນຫຍັງການທີ່ຈະປະກາດພຣະວັຈນະຂອງພຣະເຈົ້າຈຶ່ງເປັນສິ່ງສຳຄັນແທ້. <u>ນຶ່ງ</u>, ຄົນທັງຫລາຍ**ຈະທົນບໍ່ໄດ້ຕໍ່ຄຳສອນທີ່ມີຫລັກ,** ເຂົາຈະຮວບຮວມ**ຄຣູສອນ**ໄວ້ໃຫ້ສອນໃນສິ່ງທີ່ເຂົາຢາກຟັງ.

ໂປໂລໄດ້ອະທິບາຍເຖິງຮູບພາບ ທີ່ຄົນພວກນີ້**ຕ້ອງການພຽງແຕ່ຈະຟັງສິ່ງໃໝ່ເພື່ອແກ້ການຄັນຫູຂອງເຂົາເທົ່ານັ້ນ.**

ທີສາມ, ຫັນໄປຟັງແຕ່**ເລື່ອງນິຍາຍ**ຕ່າງໆ **ແທນຄວາມຈິງ**; ຍ້ອນສາເຫດການນັບຖືສາສນາທີ່ຜິດນີ້ໄດ້ເຮັດໃຫ້ຫ່າງຈາກຄວາມເຊື່ອໃນພຣະຄຣິດ. ແລະໃນສາມສິ່ງທີ່ໄດ້ກ່າວຢູ່ຂ້າງເທິງນີ້ແມ່ນອະທິບາຍເຖິງປະຕິກິຣິຍາຂອງຄົນທີ່ບໍ່ເຊື່ອໃນປັດຈຸບັນນີ້ແລະໃນສມັຍພຣະຄັມພີເດີມຄືກັນ.

ມີຫລາຍຄົນໄດ້ປະຕິເສດຄວາມຈິງແຕ່ຍອມຮັບຄວາມຫລອກລວງເພື່ອຄວາມພໍໃຈຫລາຍກວ່າ. ດ້ວຍຄວາມຜິດພາດນຈະຖືກເປີດເຜີຍໃນເວລາທີ່ພຣະເຢຊູສະເດັດກັບມາເພື່ອ**ພິພາກສາ**ທຸກຄົນ. ຜູ້ທີ່ມີຄວາມເຊື່ອແລ້ວສາມາດທີ່ຈະຊ່ວຍຄົນອື່ນໆ ໃຫ້ຮູ້ຄວາມຈິງຄືຈະບໍ່ໃຫ້ຫລົງໄປກັບຄຳສອນທີ່ຫລອກລວງນັ້ນໂດຍຊອກຫາວິທີທາງທີ່ຈະໃຫ້ເຂົາເຫັນແຈ້ງເຖິງຄວາມຈິງຂອງພຣະເຈົ້າ. ຜູ້ທີ່ເຊື່ອຄວນຈະຫມູນໃຈແລະຊ່ວຍເຫລືອພວກທີ່ຊອກຫາຄຳຕອບ, ດ້ວຍຄວາມອົດທົນຫມູນໃຈແລະສອນພຣະຄຳທີ່ຖືກຕ້ອງໃຫ້ແກ່ເຂົາ.

## ບົດຮຽນຊີວິດ

ຄວາມເຊື່ອທີ່ຄຣິສະຕຽນມີແມ່ນມີພື້ນຖານທີ່ໝັ້ນຄົງຈາກການເປີຍເຜີຍຂອງພຣະເຈົ້າໂດຍໃນພຣະທັມຂອງພຣະອົງ. ຜູ້ທີ່ເຊື່ອໃນພຣະອົງຄວນສຶກສາແລະນຳເອົາພຣະຄຳຂອງພຣະອົງໃຫ້ເຂົ້າມາຢູ່ໃນການດຳຣົງຊີວິດ, ແລະເພື່ອຈະເຮັດດັ່ງນີ້ ຄືການຕຽມພ້ອມທີ່ຈະແບ່ງປັນພຣະວັຈນະຂອງພຣະເຈົ້າອີກທັງຄວາມຮັກແລະຄວາມລອດພົ້ນທີ່ມີໃນພຣະຄຣິດ. ດ້ວຍຮູ້ວ່າການຮັບໃຊ້ທຸກຢ່າງໃຫ້ແກ່ພຣະຄຣິດແມ່ນໄດ້ຖືກນັບໄວ້ແລ້ວເພື່ອຜູ້ທີ່ເຊື່ອ ເພື່ອຈະເປັນກຳລັງຫມູນໃຈ ແລະເພີ່ມພະລັງໃຫ້ຜູ້ທີ່ກຳລັງຊອກຫາຄຳຕອບໂດຍເຮັດໃຫ້ເຂົາມີຄວາມອົດທົນແລະຫມູນໃຈແລະສັ່ງສອນເຂົາໃນເຣື່ອງຄວາມຈິງຂອງພຣະຄັມພີ.

*ເປັນຫຍັງພວກເຮົາຈຶ່ງຄິດວ່າພຣະຄັມພີມີຄວາມສຳຄັນຕໍ່ຄຣິສະຕຽນຄືຜູ້ທີ່ໄດ້ຮັບຄວາມທຸກລຳບາກຍ້ອນການຂົ່ມເຫງ?*

ນີ້ຄືສອງສາມສິ່ງທີ່ເປັນທິດທາງທີ່ຈຳນຳບົດຮຽນບົດນີ້ມາໃຊ້:

* ຈົ່ງຂອບພຣະຄຸນພຣະເຈົ້າຢູ່ເລື້ອຍໆ ໃນການທີ່ໄດ້ຊົງສຳແດງໃຫ້ເຫັນຜ່ານໃນພຣະຄຳຂອງພຣະອົງ.

* ຈົ່ງຈັດເວລາໄວ້ສຳລັບການອ່ານ,ທັນປ່ຽນຈິດໃຈ, ແລະສຶກສາພຣະຄຳຂອງພຣະເຈົ້າໃຫ້ເປັນປົກຕິ.

* ຖ້າທ່ານຫາກຍັງບໍ່ເຄີຍອ່ານພຣະຄັມພີຕັ້ງແຕ່ຕົ້ນຈົນຈົບ, ຈົ່ງຊອກຫາວິທີທາງ( ຫລືວາງໂຄງການເອົາເອງ ) ຄືອັນໃດກໍໄດ້ທີ່ຈະຊ່ວຍໃຫ້ທ່ານໄດ້ອ່ານຈົບພາຍໃນນຶ່ງປີ.

ໃນປີ 1660, ຈອນ ບັນຍັນ ໄດ້ຖືກຕິດຄຸກໃນປະເທດອັງກິດໃນຂະນະທີ່ອາຍຸຂອງລາວປະມານ 32 ປີຍ້ອນສາເຫດທີ່ເທສນາຂ່າວປະເສີດ. ໃນຂະນະທີ່ຖືກຄຸກຢູ່ນັ້ນ, ບັນຍັນ ກໍໄດ້ຖືກອະນຸຍາດໃຫ້ພິມປຶ້ມສອງຫົວ: ຄືພຣະຄັມພີແລະ ປຶ້ມຂອງ Fox's Book of Martyrs. ແລະໄດ້ຂຽນປຶ້ມ A Pilgrim Progress ແລະອີກປຶ້ມອື່ນໆ ອີກ. ພຣະຄຳຂອງພຣະເຈົ້າແມ່ນມີຣິດອຳນາດຢູ່ເຫນືອທຸກສິ່ງໂດຍເຮັດໃຫ້ ບັນຍັນ ໄດ້ມີໂອກາດດຳເນີນການປະກາດຕໍ່ໄປ, ທັງຕໍ່ພວກນັກໂທດທີ່ຢູ່ໃນຄຸກນຳກັນໂດຍການເປັນພະຍານສ່ວນຕົວ ແລະສ່ວນຜູ້ທີ່ຢູ່ຂ້າງນອກກໍໄດ້ອ່ານປຶ້ມທີ່ລາວໄດ້ຂຽນ.

ການປະກາດພຣະວັຈນະຂອງບັນຍັນຍັງຄົງດຳເນີນຕໍ່ມາຈົນເຖິງທຸກວັນນີ້, ແລະຕັ້ງແຕ່ປຶ້ມຫລາຍຫົວທີ່ລາວຂຽນແລະພິມອອກແລະປຶ້ມ A Pilgrim's Progress ກໍຍັງຄົງເປັນປຶ້ມທີ່ໄດ້ຮັບຄວາມນິຍົມແລະໄດ້ຂາຍດີທີ່ສຸດ. ຂໍ້ຄວາມປຽບທຽບເຣື່ອງຂອງໂຈ ( ແມ່ນຢູ່ໃນບົດຮຽນນີ້ຕອນເລີ້ມຕົ້ນ ), ໂຈ ບັນຍັນ ຮູ້ວ່າພຣະຄັມພີແມ່ນພຣະຄຳຂອງພຣະເຈົ້າ-ແລະພຣະອົງໄດ້ຊົງສຳແດງພຣະອົງໃຫ້ຮູ້ເຖິງຄວາມຮັກຂອງພຣະອົງຕໍ່ຜູ້ທີ່ໄດ້ຮັບໃຊ້ພຣະອົງ.